ແຜນງານບິດວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR






# Stay in School, Shape the Future: Ministry of Education and Sports and Australia launch national campaign to reignite a love of learning

## Media Report

## 23 June – 01 July 2025

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ ຕາງໜ້າໃຫ້ລັດຖະບານອົດສະຕຣາລີ
Basic Education Quality and Access in Lao PDR is managed by Tetra Tech International Development on behalf of the Australian Government.

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2025-06-24 | Newspaper | Public Security | Page 2 |
| 2025-06-25 | Newspaper | Vientiane Times | Front and page 2 |
| 2025-06-25 | Newspaper | Pathedlao | Page 2 |
| 2025-06-25 | Newspaper | Army | Page 6 |
| 2025-06-25 | Newspaper | Vientiane Mai | Page 8 |
| 2025-06-26 | Newspaper | Pasaxon | Page 9 |
| 2025-06-27 | Newspaper | Vientiane Mai (Second time) | Page 2 |
| 2025-06-23 | Social media | Lao Security News Facebook | 148K Followers |
| 2025-06-23 | Social media | Edu-Sport Daily News Facebook | 12K Followers |
| 2025-06-23 | Social media | Pathedlao Facebook | 389K Followers |
| 2025-06-23 | Social media | Economic and Commerce Facebook | 629K Followers |
| 2025-06-23 | Social media | Pasaxon Facebook | 30K Followers |
| 2025-06-24 | Social media | VTE 9 Facebook | 626K Followers |
| 2025-06-24 | Social media | Lao National TV Youtube | 130K Subscribers |
| 2025-06-25 | Social media | Vientiane Times Facebook | 78K Followers |
| 2025-06-25 | Social media | LATV (Army) Facebook | 200K Followers |
| 2025-06-25 | Social media | Edu Sport TV Online Facebook | 75K Followers |
| 2025-06-25 | Social media | Lao ESTV Youtube | 1.78K Subscribers |
| 2025-06-27 | Social media | Lao Star TV Facebook | 984K Followers |
| 2025-06-27 | Social media | Vientiane Radio FM 10.5 Facebook | 85K Followers |
| 2025-06-27 | Social media | Lao National Radio FM 103.7 Facebook | 173K Followers |
| 2025-07-01 | Social media | Lao National Television-English Program | 65K Followers |
| 2025-06-23 | Website | Laoedaily.com | Read article in Lao here |
| 2025-06-23 | Website | KPL English | Read article in English here |
| 2025-06-24 | Website | BEQUAL (English and Lao) | Read article in English here |
| 2025-06-25 | Website | Vientiane Times | |
| 2025-06-24 | Radio | Army Radio FM 99.7 | |
| 2025-06-24 | Radio | Public Security Radio FM 101.5 | |
| 2025-06-24 | Radio | Lao Youth FM 90.00 MHZ | |
| 2025-06-24 | Radio | Lao National Radio FM 103.7 | |
| 2025-06-24 | Radio | Vientiane Radio FM 105.5 | |
| 2025-06-28 | Radio | Education news FM 103.7 MHZ | |
| 2025-06-24 | TV | VTE 9 | Watch TV news here |
| 2025-06-24 | TV | Lao National TV | Watch TV news here |

| | | | |
|---|---|---|---|
| 2025-06-25 | TV | LATV (Army) | Watch TV news here<br>At time: 13:55 |
| 2025-06-25 | TV | Lao ESTV | Watch TV news here |
| 2025-06-27 | TV | Lao Star TV | Watch TV news here |
| 2025-07-01 | TV | Lao National Television-English Program | Watch English TV news here |
| 2025-06-26 | WhatsApp | MT-PT WhatsApp and FB groups | 19 groups with trainers +/- 713 members |
| 2025-06-26 | WhatsApp | PESS-DESB | 18 Provincial groups 426 members |
| 2025-06-26 | WhatsApp | Pre-Service Writing team | 8 TTCs and 2 universities 73 members |
| 2025-06-26 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2025-06-26 | WhatsApp | Target TTC | Key coordinators from the 3 target TTCs 17 members |
| 2025-06-26 | WhatsApp | IPS | in targeted provinces-LNT, XKH, SVK- 8 Districts in XKH, 12 Districts |
| 2025-06-26 | WhatsApp | Teaching Standard Review group | MT-PT- 28 members |

## Pictures of articles in the media

| 2025-06-24 | Newspaper | Public Security | Page 2 |
|---|---|---|---|



ຄວາມສະຫງົບ 2 ຂ່າວທົ່ວໄປ ວັນອັງຄານ 24 ມິຖຸນາ 2025

# ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ລິເລີ່ມໂຄງການ ຊຸກຍູ້ ຄວາມຮັກໃນການສຶກສາຜ່ານບົດເລື່ອງວີດີໂອ

| 2025-06-25 | Newspaper | Vientiane Times | Front and Page 2 |
|---|---|---|---|



Vientiane Times

Inside

Laos, Australia launch "love learning" campaign to stem student dropouts [ Page 2 ]



Vientiane Times

Mr Outhid Thipmany and Ms Vanessa Hegarty attend the "love learning" workshop.

# Laos, Australia launch "love learning" campaign to stem student dropouts

Times Reporters

The governments of Laos and Australia have launched a campaign to rekindle a love of learning in Laos, aiming to tackle the alarming student dropout rates driven by economic pressures and a growing perception that education no longer guarantees employment.

The Ministry of Education and Sports is running a scriptwriting workshop from June 23-26, to develop a new communication campaign that promotes the value of education and supports student retention.

Initiated at the request of the Ministry of Education and Sports, the campaign is being developed with support from the Australian government through the Basic Education Quality and Access in Laos (BEQUAL) programme.

First Secretary at the Australian Embassy to Laos, Ms Vanessa Hegarty, praised the collaborative effort, saying "This workshop is part of a shared effort to respond to one of the most urgent issues in education today: student dropouts."

"Through these short, powerful videos, we hope to speak directly to parents, students, teachers and communities, encouraging them to see education as a valuable investment in the future." The campaign will include several short videos that address the growing issue of student dropouts in Laos.

The videos aim to shift perceptions among students, parents and communities by showing that education, while not always an immediate path to employment, builds the skills and opportunities young people need to shape their own futures.

Deputy Director of the Research Institute for Educational Sciences, Mr Outhid Thipmany, said the campaign seeks to inspire students to stay in school and encourage parents to support their children's education, paving the way for a stronger future for Laos.

"This campaign is one way we can reach into homes and hearts, reminding parents and students that staying in school matters, because education is the pathway to resilience and opportunity. In a rapidly changing world, getting an education is the preparation for a successful future," he said.

Over the four-day workshop, the ministry's video production teams will refine the video scripts and develop storyboards. The final videos will reflect the realities of Lao families, using culturally relevant examples.

The videos will be released before the start of the 2025-2026 school year in September.

The campaign will be broadcast on national television, shared on social media, and used in community outreach by National Assembly members.

Videos will also be made available to teachers, pedagogical advisors, and education officials to support local advocacy in schools and villages.

| 2025-06-25 | Newspaper | Pathedlao | Page 2 |
|---|---|---|---|

# ສະຄລິບວິດີໂອສົ່ງເສີມການສຶກສາ ຈະເຜີຍແຜ່ໃນເດືອນກັນຍາ 2025 ນີ້




ຂປລ. ສະຖາບັນວິທະຍາສາດການສຶກສາແຫ່ງຊາດ (ສວສ), ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານປະເທດອົດສະຕຣາລີ ໂດຍຜ່ານແຜນງານບີຄວາ ຈັດກອງປະຊຸມຂຽນສະຄລິບວິດີໂອສົ່ງເສີມການສຶກສາໃນວັນທີ 23 ມິຖຸນາ 2025 ນີ້ ໂດຍການເປັນປະທານຮ່ວມຂອງ ທ່ານ ອຸທິດ ທິບມະນີ ຮອງຜູ້ອຳນວຍການ ສວສ ແລະ ທ່ານ ນາງ ວາເນັດຊ້າ ເຣັກກາທີ ເລຂາເອກສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ, ມີຄະນະອຳນວຍການສູນພັດທະນາສື່ການຮຽນ-ການສອນ ແລະ ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ, ມີພະນັກງານຈາກບັນດາກົມທີ່ກ່ຽວຂ້ອງ, ພະນັກງານແຜນງານບີຄວາ ແລະ ເຕຕາຫ້າຍທີ່ຕໍ່ການອຸປະມາ ປະຈຳລາວ ລາວ ເຂົ້າຮ່ວມ.

ທ່ານ ອຸທິດ ທິບມະນີ ໄດ້ໃຫ້ຮູ້ວ່າ: ກອງປະຊຸມໃນຄັ້ງນີ້, ຈັດຂຶ້ນໂດຍມີຈຸດປະສົງ ແລະ ເຫດຜົນຫລັກຂອງການສ້າງສາລະຄະດີວິດີໂອສົ່ງເສີມການສຶກສາ ເພື່ອເປັນການຊຸກຍູ້ສົ່ງເສີມໃຫ້ສັງຄົມລາວເຫັນໄດ້ຄວາມສຳຄັນຂອງການສຶກສາ ໄດ້ກະກຽມມາເຫັນວ່າມີວິດີໂອຫລາຍຕອນປະມານ 4-5 ຕອນ, ທຸກຕອນກໍໜ້າສົນໃຈ ແລະ ເປັນປະໂຫຍດໃນການສົ່ງເສີມການສຶກສາ. ແຕ່ເນື່ອງຈາກວ່າເປັນວິດີໂອແບບໃໝ່ຊຸດທຳອິດຕ່າງຈາກວິດີໂອທີ່ເຄີຍຜະລິດຜ່ານມາທັງມີເວລາຈຳກັດ ແລະ ຕາມການປຶກສາຂັ້ນວິຊາການຂອງພະນັກງານຜະລິດຄື່ອຈິງຂອງທັງສອງສູນຄື: ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ ແລະ ສູນພັດທະນາສື່ການຮຽນ-ການສອນ ເຫັນວ່າຄວນຜະລິດຈຳນວນຕາມຄວາມສາມາດຄືຈິງ ເພື່ອໃຫ້ທັນກັບສະພາບຂອງການໃຊ້ງານ. ວິດີໂອນີ້, ຈະໃຫ້ມີການເຜີຍແຜ່ກ່ອນເປີດສົກຮຽນໃໝ່ໃນເດືອນກັນຍາ 2025 ທີ່ຈະມາເຖິງນີ້. ສະນັ້ນ, ໃຫ້ຄົ້ນຄວ້າເຮັດຈຳນວນໜ້ອຍກ່ອນແຕ່ໃຫ້ມີຄຸນນະພາບດີເລີດ, ອາດຈະເຮັດສູນລະວິດີໂອກ່ອນເພາະຖ້າເຮັດຈຳນວນຫລາຍຕາມການກະກຽມອາດຈະບໍ່ທັນຕາມແຜນການ. ຫລັງຈາກນັ້ນ, ຈຶ່ງຫາເວລາຄົ້ນຄວ້າສ້າງວິດີໂອຕໍ່ໄປອີກຈະເປັນການດີ ແລະ ຫວັງວ່າຈະມີວິດີໂອດີໆທີ່ເປັນປະໂຫຍດຕໍ່ການສຶກສາ ກໍຄື ຕໍ່ສັງຄົມລາວ ເພາະວ່າການສຶກສາເປັນພື້ນຖານຂອງການດຳລົງຊີວິດວຽກງານ. ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ ເນື່ອງຈາກສະພາບການຂອງໂລກ ກໍຄື ສະພາບການບ້ານເມືອງຂອງລາວເຮົາໄດ້ຮັບຜົນສະທ້ອນຈາກສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ສົ່ງຜົນໃຫ້ການເອົາໃຈໃສ່ໃນການສຶກສາຮ່ຳຮຽນຂອງນັກຮຽນ ກໍຄື ການສົ່ງເສີມຂອງຜູ້ປົກຄອງຕໍ່ການສຶກສາໄດ້ມີທ່າອ່ຽງຫລຸດໜ້ອຍຖອຍລົງເລື້ອຍໆ. ສະນັ້ນ, ວິດີໂອສົ່ງເສີມການສຶກສາທີ່ຄົ້ນຄວ້າສ້າງຂຶ້ນມານີ້ຈະເປັນທ່າແຮງທີ່ດີໃນການດຶງດູດຜູ້ຊົມ ກໍຄື ສັງຄົມລາວເຫັນໄດ້ຄວາມສຳຄັນຂອງການສຶກສາຕໍ່ກັບການດຳລົງຊີວິດວຽກງານປະຈຳວັນ.

ໂອກາດນີ້, ທ່ານ ອຸທິດ ທິບມະນີ ຍັງໄດ້ຮຽກຮ້ອງໃຫ້ພະນັກງານທຸກທ່ານຈົ່ງໄດ້ເອົາໃຈໃສ່ຄົ້ນຄວ້າສະຄລິບໃຫ້ດີ, ຖີ່ຖ້ວນ ແລະ ອອກມາດີທີ່ສຸດຕາມທີ່ທາງພະນັກງານເຜີຍແຜ່ອອກສູ່ສັງຄົມໂດຍໄວຕາມແຜນການ.

ທ່ານ ນາງ ວາເນັດຊ້າ ເຣັກກາທີ ໄດ້ຊົມເຊີຍຕໍ່ການຮ່ວມມືດັ່ງກ່າວວ່າ: ກອງປະຊຸມຄັ້ງນີ້ເປັນສ່ວນໜຶ່ງຂອງຄວາມພະຍາຍາມຮ່ວມກັນ ເພື່ອແກ້ໄຂບັນຫາອັນຮີບດ່ວນທີ່ສຸດໃນຂະແໜງການສຶກສາປັດຈຸບັນ ກໍຄື ການປະລະການຮຽນຂອງນັກຮຽນ, ເດັກນ້ອຍໃນລາວຫລາຍຄົນໄດ້ອອກໂຮງຮຽນໄວເກີນໄປ ແລະ ເມື່ອເຂົາເຈົ້າອອກໂຮງຮຽນ, ໄດ້ຈຳກັດອະນາຄົດຂອງເຂົາເຈົ້າ, ດ້ານໂອກາດຂອງຕົນເອງ ແລະ ການພັດທະນາປະເທດຊາດ. ຜ່ານວິດີໂອສັ້ນ, ທີ່ມີຄຸນຄ່າ, ພວກເຮົາຫວັງວ່າຈະໄດ້ສົ່ງຂໍ້ຄວາມໂດຍກົງເຖິງຜູ້ປົກຄອງ, ນັກຮຽນ, ຜູ້ເຮັດວຽກໃນຂະແໜງການສຶກສາ, ຄູ ແລະ ຊຸມຊົນ; ຊຸກຍູ້ສົ່ງເສີມໃຫ້ເຂົາເຈົ້າເຫັນວ່າການສຶກສາເປັນການລົງທຶນທີ່ມີຄ່າໃນອະນາຄົດ.

| 2025-06-25 | Newspaper | Army | Page 6 |
|---|---|---|---|

# ລິເລີ່ມຂະບວນການຊຸກຍູ້ຄວາມຮັກໃນການສຶກສາອີກຄັ້ງ ໃນຂອບເຂດທົ່ວປະເທດ




❖ ໃນວັນທີ 23-26 ເດືອນມິຖຸນາ 2025 ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ເປີດກອງປະຊຸມຂຽນບົດເລື່ອງວິດີໂອ ເພື່ອສົ່ງເສີມຄຸນຄ່າຂອງການສຶກສາ ແລະ ສະໜັບສະໜູນການສືບຕໍ່ຮຽນຂອງນັກຮຽນ. ໂດຍການເປັນປະທານຂອງ ທ່ານ ອຸທິດ ທິບມະນີ ຮອງຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ທ່ານ ນາງ ວາເນັດຊ້າ ເຣັກກາທີ ເລຂາເອກ, ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ. ຂະບວນການດັ່ງກ່າວ ຂຶ້ນແຜນສ້າງວິດີໂອ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານການຄຸນນະພາບ ແລະ ຂະຫຍາຍໂອກາດສຳລັບການເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ).

ທ່ານ ອຸທິດ ທິບມະນີ ໄດ້ກ່າວວ່າ: "ການສຶກສາບໍ່ພຽງແຕ່ເປັນຜົນສຳເລັດຂອງບຸກຄົນ, ແຕ່ຍັງເປັນການລົງທຶນຂອງປະເທດ. ພວກເຮົາຕ້ອງບອກເຖິງຊຸມຊົນຂອງພວກເຮົາວ່າ ການຮຽນຊ່ວຍເປີດປະຕູ, ສ້າງຄວາມສາມາດກຸ້ມຕົນເອງ ແລະ ຊ່ວຍໃຫ້ໄວໜຸ່ມເຕີບໂຕເປັນຜູ້ໃຫຍ່ທີ່ດີ. ໂດຍການສະໜັບສະໜູນຢ່າງໜັກແໜ້ນ ຈາກລັດຖະບານອົດສະຕຣາລີ, ພວກເຮົາຈະສ້າງວິດີໂອທີ່ສົ່ງຂໍ້ຄວາມສຳຄັນໂດຍກົງກັບ ເຖິງຜູ້ປົກຄອງ ແລະ ນັກຮຽນ. ຈະປ່ຽນຄວາມຄິດຂອງຄອບຄົວໃນການຄິດກ່ຽວກັບອະນາຄົດຂອງລູກຄົນແບບໃດ. ທັງນີ້ກໍເພື່ອຊ່ວຍໃຫ້ການສຶກສາຖືເປັນບູລິມະສິດອີກຄັ້ງ".

ທ່ານ ນາງ ວາເນັດຊ້າ ເຣັກກາທີ ໄດ້ຊົມເຊີຍຕໍ່ການຮ່ວມມືດັ່ງກ່າວວ່າ: "ກອງປະຊຸມຄັ້ງນີ້ ເປັນສ່ວນໜຶ່ງຂອງຄວາມພະຍາຍາມຮ່ວມກັນ ເພື່ອແກ້ໄຂບັນຫາອັນຮີບດ່ວນທີ່ສຸດໃນຂະແໜງການສຶກສາປະຈຸບັນ ກໍຄື: ການປະລະການຮຽນຂອງນັກຮຽນ, ເດັກນ້ອຍໃນລາວຫຼາຍຄົນ ໄດ້ອອກໂຮງຮຽນໄວເກີນໄປ ແລະ ເມື່ອເຂົາເຈົ້າອອກໂຮງຮຽນ, ໄດ້ຈຳກັດອະນາຄົດຂອງເຂົາເຈົ້າ, ດ້ານໂອກາດຂອງຕົນເອງ ແລະ ການພັດທະນາປະເທດຊາດ. ຜ່ານວິດີໂອສັ້ນ, ທີ່ມີຄຸນຄ່າ, ພວກເຮົາຫວັງວ່າຈະໄດ້ສົ່ງຂໍ້ຄວາມໂດຍກົງເຖິງຜູ້ປົກຄອງ, ນັກຮຽນ, ຜູ້ເຮັດວຽກໃນຂະແໜງການສຶກສາ, ຄູ ແລະ ຊຸມຊົນ. ຊຸກຍູ້ສົ່ງເສີມໃຫ້ເຂົາເຈົ້າເຫັນວ່າການສຶກສາເປັນການລົງທຶນທີ່ມີຄ່າໃນອະນາຄົດ".

ທ່ານ ອຸທິດ ທິບມະນີ ໄດ້ອະທິບາຍຕື່ມອີກວ່າ: "ໂດຍສະແດງໃຫ້ເຫັນວ່າການສຶກສາເສີມສ້າງທັກສະທີ່ຈຳເປັນ ແລະ ເພີ່ມໂອກາດ, ແຜນໂຄສະນາຈະຊ່ວຍເປັນແຮງບັນດານໃຈໃຫ້ແກ່ນັກຮຽນສືບຕໍ່ການຮຽນ ແລະ ຊຸກຍູ້ໃຫ້ຜູ້ປົກຄອງສະໜັບສະໜູນການສຶກສາຂອງລູກຫຼານຂອງເຂົາເຈົ້າ, ປູທາງໄປສູ່ອະນາຄົດທີ່ເຂັ້ມແຂງຂອງປະເທດລາວ. ການສຶກສາແມ່ນເປັນຄວາມຮັບຜິດຊອບຮ່ວມກັນທຸກຄົນ. ແຜນໂຄສະນານີ້ແມ່ນເປັນອີກທາງເລືອກໜຶ່ງທີ່ພວກເຮົາຈະສາມາດເຂົ້າເຖິງຂັ້ນຄອບຄົວ ແລະ ໜໍ່ໃຈຂອງຜູ້ປົກຄອງ ທີ່ຈະໄດ້ຮັບການຢ້ຳຄືນວ່າ ການສືບຕໍ່ການຮຽນຂອງນັກຮຽນມີຄວາມສຳຄັນສໍ່າໃດ. ເພາະການສຶກສາແມ່ນເປັນເສັ້ນທາງສູ່ຄວາມສາມາດກຸ້ມຕົນເອງ ແລະ ເຂົ້າເຖິງໂອກາດ. ໃນໂລກທີ່ມີການປ່ຽນແປງຢ່າງໄວ, ການໄດ້ຮັບການສຶກສາແມ່ນເປັນການກະກຽມຄວາມພ້ອມສຳລັບອະນາຄົດ".

# ຍົກລະດັບທາງດ້ານວິຊາການຂຽນບົດເລື່ອງວິດີໂອເພື່ອການສຶກສາ



ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ຝຶກອົບຮົມການຂຽນບົດເລື່ອງວິດີໂອ ໃນວັນທີ 23-26 ມິຖຸນາ 2025 ທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ເພື່ອສ້າງຂະບວນສິ່ງຂໍ້ຄວາມທີ່ຈະສົ່ງເສີມຄຸນຄ່າຂອງການສຶກສາ ແລະ ສະໜັບສະໜູນການສືບຕໍ່ຮຽນຂອງນັກຮຽນ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານການຄຸນນະພາບ ແລະ ຂະຫຍາຍໂອກາດສໍາລັບການເຂົ້າເຖິງການສຶກສາຂັ້ນພື້ນຖານໃນລາວ (ແຜນງານບີຄວາ) ເປັນປະທານຂອງທ່ານ ອຸທິດ ທິບມະນີ ຮອງຜູ້ອໍານວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ທ່ານນາງ ອາເນັດຊ້າ ເຣັກກາທີ້ ເລຂາເອກສະຖານທູດອົດສະຕຣາລີ ປະຈໍາລາວ ມີຜູ້ຕາງໜ້າຈາກ ສວສ ກົມ ສນ ຂະແໜງການ ແລະ ພະນັກງານກ່ຽວຂ້ອງຂອງເຂົ້າຮ່ວມ.

ການຝຶກອົບຮົມຄັ້ງນີ້ນໍາພາໂດຍຜູ້ຊ່ຽວຊານວຽກງານສື່ສານຂອງແຜນງານບີຄວາທີ່ໄດ້ໃຫ້ຄໍາແນະນໍາດ້ານວິຊາການກ່ຽວກັບການຂຽນບົດເລື່ອງ ແລະ ວິທີການເລົ່າເລື່ອງລາວກອງປະຊຸມເປັນບາດກ້າວທໍາອິດໃນການແກ້ໄຂອັດຕາການອອກໂຮງຮຽນຂອງນັກຮຽນທີ່ກ່ຽວຂ້ອງກັບຄວາມຫຍຸ້ງຍາກດ້ານເສດຖະກິດ ແລະ ຄວາມເຊື່ອທີ່ເພີ່ມຂຶ້ນວ່າການສຶກສາບໍ່ໄດ້ນໍາໄປສູ່ວຽກເຮັດງານທໍາທີ່ດີ.

ທ່ານ ອຸທິດ ທິບມະນີ ໄດ້ກ່າວວ່າ: ການສຶກສາບໍ່ພຽງແຕ່ເປັນຜົນສໍາເລັດຂອງບຸກຄົນ ແຕ່ຍັງເປັນການລົງທຶນຂອງປະເທດ ພວກເຮົາຕ້ອງບອກເຖິງຊຸມຊົນຂອງພວກເຮົາວ່າ ການຮຽນຊ່ວຍເປີດປະຕູ ສ້າງຄວາມສາມາດກັບຕົນເອງ ແລະ ຊ່ວຍໃຫ້ໄວໜຸ່ມເຕີບໂຕເປັນຜູ້ໃຫຍ່ທີ່ດີ ພວກເຮົາຈະສ້າງວິດີໂອທີ່ສົ່ງຂໍ້ຄວາມສໍາຄັນໂດຍກົງເຖິງຜູ້ປົກຄອງ ແລະ ນັກຮຽນເພື່ອປັບຄວາມຄິດຂອງຄອບຄົວໃນການຄິດກ່ຽວກັບອະນາຄົດຂອງລູກຄືແບບໃດ ທັງນີ້ ເພື່ອຊ່ວຍໃຫ້ການສຶກສາຖືເປັນບູລິມະສິດທີ່ສໍາຄັນ.

ທ່ານນາງ ອາເນັດຊ້າ ເຣັກກາທີ້ ໄດ້ກ່າວຊົມເຊີຍຕໍ່ການຮ່ວມມືດັ່ງກ່າວເປັນສ່ວນໜຶ່ງຂອງຄວາມພະຍາຍາມ ເພື່ອແກ້ໄຂບັນຫາອັນຮີບດ່ວນທີ່ສຸດໃນຂະແໜງການສຶກສາປັດຈຸບັນ ກໍຄືການປະລະການຮຽນຂອງນັກຮຽນເດັກນ້ອຍໃນລາວຫຼາຍຄົນໄດ້ອອກໂຮງຮຽນໄວເກີນໄປ ແລະ ເມື່ອເຂົາເຈົ້າອອກໂຮງຮຽນໄດ້ຈໍາກັດອະນາຄົດຂອງເຂົາເຈົ້າດ້ານໂອກາດຂອງຕົນເອງ ແລະ ການພັດທະນາປະເທດຊາດຜ່ານວິດີໂອສັ້ນທີ່ມີຄຸນຄ່າ ພວກເຮົາຫວັງວ່າຈະໄດ້ສົ່ງຂໍ້ຄວາມໂດຍກົງເຖິງຜູ້ປົກຄອງ ນັກຮຽນ ຜູ້ເຮັດວຽກໃນຂະແໜງການສຶກສາ ຄູ ແລະ ຊຸມຊົນ ຊຸກຍູ້ສົ່ງເສີມໃຫ້ເຂົາເຈົ້າເຫັນວ່າການສຶກສາເປັນການລົງທຶນທີ່ມີຄ່າໃນອະນາຄົດ.

ແຜນໂຄສະນາດັ່ງກ່າວຈະປະກອບມີວິດີໂອສັ້ນຫຼາຍອັນທີ່ເວົ້າເຖິງບັນຫາການອອກໂຮງຮຽນຂອງນັກຮຽນທີ່ເພີ່ມຂຶ້ນໃນລາວ ວິດີໂອ ມີຈຸດປະສົງເພື່ອປ່ຽນຄວາມເຂົ້າໃຈລະຫວ່າງນັກຮຽນ ພໍ່ແມ່ ແລະ ຊຸມຊົນ ໂດຍສະແດງໃຫ້ເຫັນວ່າການສຶກສານັ້ນ ເຖິງວ່າຍັງບໍ່ທັນເປັນເສັ້ນທາງໄປສູ່ການເຮັດວຽກໄດ້ໃນຕອນນີ້ເທື່ອ ແຕ່ໄດ້ໃຫ້ທັກສະຄວາມສາມາດ ແລະ ໂອກາດທີ່ໄວໜຸ່ມຕ້ອງການ ເພື່ອສ້າງອະນາຄົດຂອງຕົນເອງ.

ໃນການຝຶກອົບຮົມຄັ້ງນີ້ທີມງານຜະລິດວິດີໂອຂອງກະຊວງຈະປັບປຸງບົດເລື່ອງຂອງວິດີໂອ ແລະ ແຕ້ມຮູບແຜນພາບເລົ່າເລື່ອງລາວທີ່ຕົກລົງເປັນເອກະພາບກັນ ຈະສະທ້ອນເຖິງຄວາມເປັນຈິງຂອງຄອບຄົວໃນລາວ ໂດຍໃຊ້ຕົວຢ່າງທີ່ສະແດງອອກໃຫ້ເຫັນເຖິງວັດທະນະທໍາ ການຜະລິດວິດີໂອຈະນໍາພາໂດຍທີມງານ ສວສ ຮ່ວມກັບກົມສ້າງຄູ ແລະ ກົມສາມັນສຶກສາ ໂດຍມີເປົ້າໝາຍທີ່ຈະອອກອາກາດກ່ອນການເລີ່ມໄຂສົກຮຽນໃໝ່ 2025-2026 ໃນເດືອນກັນຍາ 2025.

ແຜນໂຄສະນາຈະໄດ້ອອກອາກາດທາງໂທລະພາບແຫ່ງຊາດ ສື່ສັງຄົມ ແລະ ຍັງສາມາດນໍາໃຊ້ໃນໂຄສະນາປະຊາສໍາພັນໃນຊຸມຊົນໂດຍສະມາຊິກສະພາແຫ່ງຊາດ ວິດີໂອຍັງຈະຖືກເຜີຍແຜ່ໃຫ້ຄູຜູ້ເຮັດວຽກສຶກສານິເທດ ແລະ ຜູ້ເຮັດວຽກໃນຂະແໜງການສຶກສາ ເພື່ອສະໜັບສະໜູນການໂຄສະນາ ສົ່ງເສີມໃນທ້ອງຖິ່ນຂອງໂຮງຮຽນ ແລະ ໝູ່ບ້ານ.

ມະຫາວິທະຍາໄລຊຸບເຜົາ ພັດທຸກຄົນ ພອມທັງຮຽກຮ້ອງ (ຂ່າວ: ມຊ)

# ສະຄລິບວິດີໂອ ສົ່ງເສີມການສຶກສາຈະເຜີຍແຜ່ກ່ອນ ເປີດສົກຮຽນໃໝ່ ເດືອນກັນຍານີ້



ສະຖາບັນວິທະຍາສາດການສຶກສາແຫ່ງຊາດ (ສວສ) ກະຊວງສຶກສາທິການ ແລະ ກິລາ (ສສກ) ຊຶ່ງໄດ້ຮັບການສະໜັບສະໜູນຈາກລັດຖະບານປະເທດອົສຕຣາລີ ໂດຍຜ່ານແຜນງານບີຄວາ ໄດ້ຈັດກອງປະຊຸມຊຽນສະຄລິບວິດີໂອ ສົ່ງເສີມການສຶກສາ ຂຶ້ນໃນວັນທີ 23 ມິຖຸນາຜ່ານມາ ທີ່ ສວສ ໂດຍການເປັນປະທານຮ່ວມຂອງທ່ານ ອຸທິດ ທິບມະນີ ຮອງຜູ້ອຳນວຍການ ສວສ ແລະ ທ່ານ ນາງ ເຮກາທີ (Hegarty) ເລຂາເອກສະຖານທູດອົສຕຣາລີ ປະຈຳ ສປປ ລາວ, ມີຄະນະອຳນວຍການສູນພັດທະນາສື່ການຮຽນການສອນ ແລະ ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ, ມີທີມງານຈາກບັນດາກົມທີ່ກ່ຽວຂ້ອງ, ທີມງານແຜນງານບີຄວາ ແລະ ຕາງໜ້າອົງການຢູນີເຊັຍ ປະຈຳລາວ ເຂົ້າຮ່ວມ.

ທ່ານ ອຸທິດ ທິບມະນີ ກ່າວວ່າ: ກອງປະຊຸມໃນຄັ້ງນີ້, ຈັດຂຶ້ນໂດຍມີຈຸດປະສົງ ແລະ ເຫດຜົນຫຼັກຂອງການສ້າງສາລະຄະດີວິດີໂອສົ່ງເສີມການສຶກສາ ເພື່ອເປັນການຊຸກຍູ້ສົ່ງເສີມໃຫ້ສັງຄົມລາວເຫັນໄດ້ຄວາມສຳຄັນຂອງການສຶກສາ ເພາະວ່າການສຶກສາເປັນພື້ນຖານຂອງການດຳລົງຊີວິດ ແລະ ວຽກງານ. ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າເນື່ອງຈາກສະພາບການຂອງໂລກ ກໍຄືສະພາບການບ້ານເມືອງຂອງລາວເຮົາ ໄດ້ຮັບຜົນສະທ້ອນຈາກສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ສິ່ງຜົນໃຫ້ການເອົາໃຈໃສ່ໃນການສຶກສາຮ່ຳຮຽນຂອງນັກຮຽນກໍຄືການສົ່ງເສີມຂອງຜູ້ປົກຄອງຕໍ່ການສຶກສາ ໄດ້ມີທ່າອ່ຽງຫຼຸດໜ້ອຍຖອຍລົງເລື້ອຍໆ. ສະນັ້ນ, ວິດີໂອ ສົ່ງເສີມການສຶກສາ ທີ່ຄົ້ນຄວ້າສ້າງຂຶ້ນມານີ້ ຈະເປັນທ່າແຮງໜຶ່ງໃນການດຶງດູດຜູ້ຊົມ ກໍຄືສັງຄົມລາວເຫັນໄດ້ຄວາມສຳຄັນຂອງການສຶກສາຕໍ່ກັບການດຳລົງຊີວິດ ແລະ ເຮັດວຽກງານປະຈຳວັນ.

ທ່ານ ອຸທິດ ທິບມະນີ ຍັງໄດ້ຮຽກຮ້ອງໃຫ້ທີມງານທຸກທ່ານຈົ່ງໄດ້ເອົາໃຈໃສ່ຄົ້ນຄວ້າສະຄລິບໃຫ້ດີ, ທີ່ຖ້ວນ ແລະ ອອກມາດີທີ່ສຸດ ຕາມທີ່ທາງທີມງານໄດ້ກະກຽມມາເຫັນວ່າມີວິດີໂອຫຼາຍຕອນປະມານ 4-5ຕອນ ທຸກຕອນກໍໜ້າສົນໃຈ ແລະ ເປັນປະໂຫຍດໃນການສົ່ງເສີມການສຶກສາ ແຕ່ເນື່ອງຈາກວ່ານີ້ເປັນວິດີໂອແບບໃໝ່ ຊຸດທຳອິດຕ່າງຈາກວິດີໂອທີ່ເຄີຍຜະລິດຜ່ານມາທັງມີເວລາຈຳກັດ ແລະ ຕາມການປຶກສາຂັ້ນວິຊາການຂອງທີມງານຜະລິດຕົວຈິງຂອງທັງສອງສູນຄື: ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ ແລະ ສູນພັດທະນາສື່ການຮຽນການສອນ ເຫັນວ່າຄວນຜະລິດຈຳນວນຕາມຄວາມສາມາດຕົວຈິງ ເພື່ອໃຫ້ທວງທັນກັບສະພາບຂອງການໃຊ້ງານ. ວິດີໂອນີ້ຈະໃຫ້ມີການເຜີຍແຜ່ກ່ອນໄຂສົກຮຽນໃໝ່ໃນເດືອນ ກັນຍາ 2025 ທີ່ຈະມາເຖິງນີ້. ສະນັ້ນ, ໃຫ້ຄົ້ນຄວ້າເຮັດຈຳນວນໜ້ອຍກ່ອນ ແຕ່ໃຫ້ມີຄຸນນະພາບດີເລີດອາດຈະເຮັດສູນລະວິດີໂອກ່ອນ ເພາະຄັນເຮັດຈຳນວນຫຼາຍຕາມການກະກຽມ ຢ້ານຈະບໍ່ທັນຕາມແຜນການ. ຫຼັງຈາກນັ້ນ, ຈຶ່ງຫາເວລາຄົ້ນຄວ້າສ້າງວິດີໂອຕໍ່ໄປອີກຈະເປັນການດີ ແລະ ຫວັງວ່າຈະມີວິດີໂອດີໆ ທີ່ເປັນປະໂຫຍດຕໍ່ການສຶກສາ ກໍຄືຕໍ່ສັງຄົມລາວເຜີຍແຜ່ອອກສູ່ສັງຄົມໂດຍໄວຕາມແຜນການ.

(ຂ່າວ-ພາບ: ວັນເພັງ)

| 2025-06-27 | Newspaper | Vientiane Mai (Second times) | Page 9 |
|---|---|---|---|

# ຄວາມສຳຄັນຂອງການຍົກລະດັບຂຽນບົດເລື່ອງວິດີໂອ ສົ່ງເສີມຄຸນຄ່າຂອງການສຶກສາ ການສືບຕໍ່ຮຽນສ້າງອະນາຄົດ






● ການສືບຕໍ່ຮຽນສ້າງອະນາຄົດ ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີຜ່ານແຜນງານການຄຸນນະພາບ ແລະ ຂະຫຍາຍໂອກາດສຳລັບການເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ເພື່ອການສືບຕໍ່ຮຽນສ້າງອະນາຄົດ ໄດ້ລິເລີ່ມຂະບວນການຊຸກຍູ້ຄວາມຮັກໃນການສຶກສາອີກຄັ້ງ ໃນຂອບເຂດທົ່ວປະເທດ ໂດຍການຍົກລະດັບການຂຽນບົດເລື່ອງວິດີໂອ ເຊິ່ງເປັນບາດກ້າວເລີ່ມຕົ້ນອັນສຳຄັນທີ່ສົ່ງຂໍ້ຄວາມອັນມີພະລັງໃຫ້ແກ່ນັກຮຽນ ແລະ ຄອບຄົວ ໃນການສຶກສາສ້າງອະນາຄົດ.

ເພື່ອບັນລຸຈຸດປະສົງລະດັບຄາດໝາຍດັ່ງກ່າວ ເມື່ອບໍ່ດົນຜ່ານມາ ກະຊວງສຶກສາທິການ ແລະ ກິລາ ແຫ່ງ ໄດ້ຂຶ້ນແຜນສ້າງວິດີໂອ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານການຄຸນນະພາບ ແລະ ຂະຫຍາຍໂອກາດສຳລັບການເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ເພື່ອສ້າງຂະບວນສົ່ງຂໍ້ຄວາມ ທີ່ຈະສົ່ງເສີມຄຸນຄ່າຂອງການສຶກສາ ແລະ ສະໜັບສະໜູນການສືບຕໍ່ຮຽນຂອງນັກຮຽນ ໂດຍພາຍໃຕ້ການຊີ້ນຳຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເຊິ່ງຂະບວນການດັ່ງກ່າວ

ທ່ານ ອທິດ ທິບພະນີ ຮອງຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກະຊວງສຶກສາທິການ ແລະ ກິລາ ໄດ້ກ່າວຕໍ່ຊຸດເຝິກອົບຮົມຄັ້ງນີ້ວ່າ: ການຍົກລະດັບວຽກງານການຂຽນບົດເລື່ອງວິດີໂອຄັ້ງນີ້ ມີຄວາມສຳຄັນຫຼາຍ ເພາະການສຶກສາບໍ່ພຽງແຕ່ເປັນຜົນສຳເລັດຂອງບຸກຄົນ ແຕ່ຍັງເປັນການລົງທຶນຂອງປະເທດ ເປັນການຊີ້ບອກເຖິງຊຸມຊົນເຫັນໄດ້ການຮຽນຊ່ວຍເປີດປະຕູ ສ້າງຄວາມສາມາດກຸ້ມຕົນເອງ ແລະ ຊ່ວຍໃຫ້ໄວໜຸ່ມເຕີບໂຕເປັນຜູ້ໃຫຍ່ທີ່ດີ ໂດຍການສະໜັບສະໜູນຢ່າງໜັກແໜ້ນ ຈາກລັດຖະບານອົດສະຕຣາລີ ພວກເຮົາຈະສ້າງວິດີໂອທີ່ສົ່ງຂໍ້ຄວາມສຳຄັນໂດຍກົງ ເຖິງຜູ້ປົກຄອງ ແລະ ນັກຮຽນ ພວກເຮົາຈະປັບຄວາມຄິດຂອງຄອບຄົວ ໃນການຄິດກ່ຽວກັບອະນາຄົດຂອງລູກຄືແບບໃດ ທັງນີ້ ກໍເພື່ອຊ່ວຍໃຫ້ການສຶກສາຖືເປັນບູລິມະສິດສຳຄັນໜຶ່ງ ໂດຍສະແດງໃຫ້ເຫັນວ່າການສຶກສາເສີມສ້າງທັກສະທີ່ຈຳເປັນ ແລະ ເພີ່ມໂອກາດ ແຜນໂຄສະນາຈະຊ່ວຍເປັນແຮງບັນດານໃຈໃຫ້ແກ່ນັກຮຽນສືບຕໍ່ການຮຽນ ແລະ ຊຸກຍູ້ໃຫ້ຜູ້ປົກຄອງ ສະໜັບສະໜູນການສຶກສາຂອງລູກຫຼານຂອງເຂົາເຈົ້າ ປູທາງໄປສູ່ອະນາຄົດທີ່ເຂັ້ມແຂງຂອງປະເທດລາວ ການສຶກສາແມ່ນເປັນຄວາມຮັບຜິດຊອບຮ່ວມກັນທຸກຄົນ ແຜນໂຄສະນານີ້ແມ່ນເປັນອີກທາງເລືອກໜຶ່ງທີ່ພວກເຮົາຈະສາມາດເຂົ້າເຖິງຂັ້ນຄອບຄົວ ແລະ ຫົວໃຈຂອງຜູ້ປົກຄອງ ທີ່ຈະໄດ້ຮັບການຢ້ຳຄືນວ່າການສືບຕໍ່ການຮຽນຂອງນັກຮຽນມີຄວາມສຳຄັນຄືແນວໃດ ເພາະການສຶກສາແມ່ນເປັນເສັ້ນທາງສູ່ຄວາມສາມາດກຸ້ມຕົນເອງ ແລະ ເຂົ້າເຖິງໂອກາດ ໃນໂລກທີ່ມີການປ່ຽນແປງຢ່າງໄວ ການໄດ້ຮັບການສຶກສາແມ່ນເປັນການກະກຽມຄວາມພ້ອມສຳລັບອະນາຄົດ ທ່ານກ່າວເນັ້ນຕື່ມວ່າ: ນີ້ບໍ່ແມ່ນພຽງແຕ່ການແຜນໂຄສະນາຜ່ານສື່ ແຕ່ເປັນຂໍ້ຄວາມສຳຄັນລະດັບຊາດຂອງຄວາມຫວັງ ແລະ ຄວາມມຸ່ງໝັ້ນໃນການສຶກສາ ໂດຍການລົງທຶນໃນການສຶກສາ ພວກເຮົາລົງທຶນໃນອະນາຄົດຂອງເດັກນ້ອຍທຸກຄົນ ອະນາຄົດຂອງທຸກຄອບຄົວ ແລະ ອະນາຄົດຂອງປະເທດ.

ທ່ານນາງ ວາເນັດຊາ ເຣັກກາທີ້ ເລຂາເອກສະຖານທູດອົດສະຕຣາລີ ປະຈຳລາວ ໄດ້ຊົມເຊີຍຕໍ່ການຮ່ວມມືດັ່ງກ່າວວ່າ: ຊຸດອົບຮົມຄັ້ງນີ້ ເປັນສ່ວນໜຶ່ງຂອງຄວາມພະຍາຍາມຮ່ວມກັນ ເພື່ອແກ້ໄຂບັນຫາອັນຮີບດ່ວນທີ່ສຸດໃນຂະແໜງການສຶກສາປັດຈຸບັນ ກໍຄື ການປະລະການຮຽນຂອງນັກຮຽນ ເດັກນ້ອຍໃນລາວຫຼາຍຄົນ ໄດ້ອອກໂຮງຮຽນໄວເກີນໄປ ແລະ ເມື່ອເຂົາເຈົ້າອອກໂຮງຮຽນ ໄດ້ຈຳກັດອະນາຄົດຂອງເຂົາເຈົ້າດ້ານໂອກາດຂອງຕົນເອງ ແລະ ການພັດທະນາປະເທດຊາດ ຜ່ານວິດີໂອສັ້ນທີ່ມີຄຸນຄ່າ ພວກເຮົາຫວັງວ່າຈະໄດ້ສົ່ງຂໍ້ຄວາມໂດຍກົງເຖິງຜູ້ປົກຄອງ ນັກຮຽນ ຜູ້ເຮັດວຽກໃນຂະແໜງການສຶກສາ ຄູ ແລະ ຊຸມຊົນ ຊຸກຍູ້ສົ່ງເສີມໃຫ້ເຂົາເຈົ້າເຫັນວ່າການສຶກສາເປັນການລົງທຶນທີ່ມີຄ່າໃນອະນາຄົດ ເພາະອະນາຄົດຂອງການສຶກສາລາວຄວນໄດ້ຮັບການບອກເລົ່າເລື່ອງລາວທີ່ມີພະລັງ ແລະ ເອົາມາເລີ່ມຕົ້ນນຳກັນແຕ່ ດຽວນີ້ເພື່ອອະນາຄົດຂອງເດັກນ້ອຍລາວ.

ຊຸດອົບຮົມການຂຽນບົດເລື່ອງຄັ້ງນີ້ ມີຜູ້ຕາງໜ້າຈາກ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ ຂະແໜງສື່ເອເລັກໂຕຣນິກ ແລະ ການສຶກສາທາງໄກ ເຊິ່ງເປັນທີມງານມີປະສົບການໃນການສ້າງຜະລິດວິດີໂອ ຂອງກະຊວງສຶກສາທິການ ແລະ ກິລາ ນອກຈາກນີ້ ຍັງມີຜູ້ເຂົ້າຮ່ວມຕາງໜ້າຈາກກົມສ້າງຄູ ແລະ ກົມສາມັນສຶກສາ ເຊິ່ງນຳພາໂດຍຜູ້ຊ່ຽວຊານວຽກງານສື່ສານຂອງແຜນງານບີຄວາ ທີ່ໄດ້ໃຫ້ຄຳແນະນຳດ້ານວິຊາການກ່ຽວກັບການຂຽນບົດເລື່ອງ ແລະ ວິທີການເລົ່າເລື່ອງລາວ ແຜນໂຄສະນາດັ່ງກ່າວຈະປະກອບມີວິດີໂອສັ້ນຫຼາຍອັນ ທີ່ເວົ້າເຖິງບັນຫາການອອກໂຮງຮຽນຂອງນັກຮຽນທີ່ເພີ່ມຂຶ້ນໃນ ສປປ ລາວ ວິດີໂອມີຈຸດປະສົງເພື່ອປ່ຽນຄວາມເຂົ້າໃຈລະຫວ່າງນັກຮຽນ ພໍ່ແມ່ ແລະ ຊຸມຊົນ ໂດຍສະແດງໃຫ້ເຫັນວ່າການສຶກສານັ້ນ ເຖິງແມ່ນວ່າຍັງບໍ່ທັນເປັນເສັ້ນທາງໄປສູ່ການເຮັດວຽກໄດ້ໃນຕອນນີ້ເທື່ອ ແຕ່ໄດ້ໃຫ້ທັກສະຄວາມສາມາດ ແລະ ໂອກາດທີ່ໄວໜຸ່ມຕ້ອງການເພື່ອສ້າງອະນາຄົດຂອງຕົນເອງ.

ຕະຫຼອດໄລຍະການເຝິກອົບຮົມຂຽນບົດເລື່ອງຄັ້ງນີ້ ທີມງານຜະລິດວິດີໂອຂອງກະຊວງຈະປັບປຸງບົດເລື່ອງຂອງວິດີໂອ ແລະ ແຕ້ມຮູບແຜນພາບເລົ່າເລື່ອງລາວ ວິດີໂອທີ່ຕົກລົງເປັນເອກະພາບກັນຈະສະທ້ອນເຖິງຄວາມເປັນຈິງຂອງຄອບຄົວໃນລາວ ໂດຍໃຊ້ຕົວຢ່າງທີ່ສະແດງອອກໃຫ້ເຫັນເຖິງວັດທະນະທຳ ການຜະລິດວິດີໂອຈະຖືກນຳພາໂດຍທີມງານ ສວສ ການຮ່ວມກັບ ກົມສ້າງຄູ ແລະ ກົມສາມັນສຶກສາ ໂດຍມີເປົ້າໝາຍທີ່ຈະອອກອາກາດກ່ອນການເລີ່ມໄຂສົກຮຽນໃໝ່ 2025-2026 ໃນເດືອນກັນຍາ 2025 ນີ້ ເຊິ່ງມີແຜນໂຄສະນາອອກອາກາດທາງໂທລະພາບແຫ່ງຊາດ ທາງສື່ສັງຄົມຕ່າງໆ ແລະ ຍັງສາມາດນຳໃຊ້ໃນໂຄສະນາປະຊາສຳພັນໃນຊຸມຊົນ ໂດຍຜ່ານສະມາຊິກສະພາແຫ່ງຊາດ ວິດີໂອຍັງຈະຖືກເຜີຍແຜ່ໃຫ້ຄູ ຜູ້ເຮັດວຽກສຶກສານິເທດ ແລະ ຜູ້ເຮັດວຽກໃນຂະແໜງການສຶກສາ ເພື່ອສະໜັບສະໜູນການໂຄສະນາສົ່ງເສີມການໃນທ້ອງຖິ່ນຂອງ ໂຮງຮຽນ ແລະ ໝູ່ບ້ານຕື່ມອີກ.

**ນຳສະເໜີໂດຍ: ແອ່ນຂາວ**

| 2025-06-23 | Pathedlao Facebook |
|---|---|

**ປະເທດລາວ Pathedlao**
18h ·

ຄລິບວິດີໂອ ສົ່ງເສີມການສຶກສາ
ຈະເຜີຍແຜ່ໃນເດືອນກັນຍາ 2025 ນີ້

ຂປລ. ສະຖາບັນວິທະຍາສາດການສຶກສາແຫ່ງຊາດ (ສວສ), ກະຊວງສຶກສາທິການ ແລະ ກິລາ(ສສກ) ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານປະເທດອົດສະຕຣາລີ ໂດຍຜ່ານແຜນງານບີຄວາ ຈັດກອງປະຊຸມຊຽນສະຄລິບວິດີໂອ ສົ່ງເສີມການສຶກສາ ໃນວັນທີ 23 ມິຖຸນາ 2025 ນີ້ ໂດຍການເປັນປະທານຮ່ວມຂອງ ທ່ານ ອຸທິດ ທິບມະນີ ຮອງຜູ້ອຳນວຍການ ສວສ ແລະ ທ່ານ ນາງ ວາເນັດຊາ ເຮັກກາທີ ເລຂາເອກສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ, ມີຄະນະອຳນວຍການສູນພັດທະນາສື່ການຮຽນ-ການສອນ ແລະ ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ, ມີທີມງານຈາກບັນດາກົມທີ່ກ່ຽວຂ້ອງ, ທີມງານແຜນງານບີຄວາ ແລະ ຕາງໜ້າອົງການຢູນິເຊບ ປະຈຳລາວ ລາວ ເຂົ້າຮ່ວມ.
ທ່ານ ອຸທິດ ທິບມະນີ ໄດ້ໃຫ້ຮູ້ວ່າ: ກອງປະຊຸມໃນຄັ້ງນີ້, ຈັດຂຶ້ນໂດຍມີຈຸດປະສົງ ແລະ ເຫດຜົນຫລັກຂອງການສ້າງສາລະຄະດີວິດີໂອ ສົ່ງເສີມການສຶກສາ ເພື່ອເປັນການຊຸກຍູ້ສົ່ງເສີມໃຫ້ສັງຄົມລາວ ເຫັນໄດ້ຄວາມສຳຄັນຂອງການສຶກສາ ເພາະວ່າການສຶກສາເປັນພື້ນຖານຂອງການດຳລົງຊີວິດວຽກງານ. ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ ເນື່ອງຈາກສະພາບການຂອງໂລກ ກໍຄືສະພາບການບ້ານເມືອງຂອງລາວເຮົາ ໄດ້ຮັບຜົນສະທ້ອນຈາກສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ສົ່ງຜົນໃຫ້ການເອົາໃຈໃສ່ໃນການສຶກສາຮໍ່າຮຽນຂອງນັກຮຽນ ກໍຄື ການສົ່ງເສີມຂອງຜູ້ປົກຄອງຕໍ່ການສຶກສາ ໄດ້ມີທ່າອ່ຽງຫລຸດໜ້ອຍຖອຍລົງເລື້ອຍໆ. ສະນັ້ນ, ວິດີໂອ ສົ່ງເສີມການສຶກສາ ທີ່ຄົ້ນຄວ້າສ້າງຂຶ້ນມານີ້ ຈະເປັນທ່າແຮງໜຶ່ງໃນການດຶງດູດຜູ້ຊົມ ກໍຄືສັງຄົມລາວເຫັນໄດ້ຄວາມສຳຄັນຂອງການສຶກສາຕໍ່ກັບການດຳລົງຊີວິດວຽກງານປະຈຳວັນ.
ໂອກາດນີ້, ທ່ານ ອຸທິດ ທິບມະນີ ຍັງໄດ້ຮຽກຮ້ອງໃຫ້ທີມງານທຸກທ່ານຈົ່ງໄດ້ເອົາໃຈໃສ່ຄົ້ນຄວ້າສະຄລິບໃຫ້ດີ, ຖີ່ຖ້ວນ ແລະ ອອກມາດີທີ່ສຸດ ຕາມທີ່ທາງທີມງານໄດ້ກະກຽມມາ ເຫັນວ່າມີວິດີໂອຫລາຍຕອນປະມານ 4-5 ຕອນ, ທຸກຕອນກໍໜ້າສົນໃຈ ແລະ ເປັນປະໂຫຍດໃນການສົ່ງເສີມການສຶກສາ. ແຕ່ເນື່ອງຈາກວ່າເປັນວິດີໂອແບບໃໝ່ຊຸດທຳອິດ ຕ່າງຈາກວິດີໂອທີ່ເຄີຍຜະລິດຜ່ານມາ ທັງມີເວລາຈຳກັດ ແລະ ຕາມການປຶກສາຂັ້ນວິຊາການຂອງທີມງານຜະລິດຕົວຈິງຂອງທັງສອງສູນຄື: ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ ແລະ ສູນພັດທະນາສື່ການຮຽນ-ການສອນ ເຫັນວ່າຄວນຜະລິດຈຳນວນຕາມຄວາມສາມາດຕົວຈິງ ເພື່ອໃຫ້ທັນກັບສະພາບຂອງການໃຊ້ງານ. ວິດີໂອນີ້, ຈະໃຫ້ມີການເຜີຍແຜ່ກ່ອນເປີດສົກຮຽນໃໝ່ໃນເດືອນກັນຍາ 2025 ທີ່ຈະມາເຖິງນີ້. ສະນັ້ນ, ໃຫ້ຄົ້ນຄວ້າເຮັດຈຳນວນໜ້ອຍກ່ອນ ແຕ່ໃຫ້ມີຄຸນນະພາບດີເລີດ, ອາດຈະເຮັດຊຸນລະວິດີໂອກ່ອນ ເພາະຖ້າເຮັດຈຳນວນຫລາຍຕາມການກະກຽມ ອາດຈະບໍ່ທັນຕາມແຜນການ. ຫລັງຈາກນັ້ນ, ຈຶ່ງຫາເວລາຄົ້ນຄວ້າສ້າງວິດີໂອຕໍ່ໄປອີກຈະເປັນການດີ ແລະ ຫວັງວ່າຈະມີວິດີໂອດີໆ ທີ່ເປັນປະໂຫຍດຕໍ່ການສຶກສາ ກໍຄື ຕໍ່ສັງຄົມລາວເຜີຍແຜ່ອອກສູ່ສັງຄົມໂດຍໄວຕາມແຜນການ.
ທ່ານ ນາງ ວາເນັດຊາ ເຮັກກາທີ ໄດ້ຊົມເຊີຍຕໍ່ການຮ່ວມມືດັ່ງກ່າວວ່າ: ກອງປະຊຸມຄັ້ງນີ້ ເປັນສ່ວນໜຶ່ງຂອງຄວາມພະຍາຍາມຮ່ວມກັນ ເພື່ອແກ້ໄຂບັນຫາອັນຮີບດ່ວນທີ່ສຸດໃນຂະແໜງການສຶກສາປະຈຸບັນ ກໍຄື ການປະລະການຮຽນຂອງນັກຮຽນ, ເດັກນ້ອຍໃນລາວຫລາຍຄົນ ໄດ້ອອກໂຮງຮຽນໄວເກີນໄປ ແລະ ເມື່ອເຂົາເຈົ້າອອກໂຮງຮຽນ, ໄດ້ຈຳກັດອະນາຄົດຂອງເຂົາເຈົ້າ, ດ້ານໂອກາດຂອງຕົນເອງ ແລະ ການພັດທະນາປະເທດຊາດ. ຜ່ານວິດີໂອສັ້ນ, ທີ່ມີຄຸນຄ່າ, ພວກເຮົາຫວັງວ່າຈະໄດ້ສົ່ງຂໍ້ຄວາມໂດຍກົງເຖິງຜູ້ປົກຄອງ, ນັກຮຽນ, ຜູ້ເຮັດວຽກໃນຂະແໜງການສຶກສາ, ຄູ ແລະ ຊຸມຊົນ; ຊຸກຍູ້ສົ່ງເສີມໃຫ້ເຂົາເຈົ້າເຫັນວ່າການສຶກສາເປັນການລົງທຶນທີ່ມີຄ່າໃນອະນາຄົດ.




You and 5 others · 1 comment · 3 shares
Like · Comment · Share

| 2025-06-23 | Economic and Commerce Facebook |
|---|---|

**ຂ່າວເສດຖະກິດ-ການຄ້າ Lao Economic Daily**
18h ·

ລິເລີ່ມຂະບວນການຊຸກຍູ້ຄວາມຮັກໃນການສຶກສາອີກຄັ້ງ ໃນຂອບເຂດທົ່ວປະເທດ.
ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ເປີດກອງປະຊຸມຊຽນບົດເລື່ອງວິດີໂອ ໃນວັນທີ 23-26 ເດືອນ ມິຖຸນາ 2025 ເພື່ອສ້າງຂະບວນສົ່ງຂໍ້ຄວາມ ທີ່ຈະສົ່ງເສີມຄຸນຄ່າຂອງການສຶກສາ ແລະ ສະໜັບສະໜູນການສືບຕໍ່ຮຽນຂອງນັກຮຽນ. ໂດຍພາຍໃຕ້ການຊີ້ນຳຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ, ຂະບວນການດັ່ງກ່າວ ຂຶ້ນແຜນສ້າງວິດີໂອ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານການຄຸນນະພາບ ແລະ ຂະຫຍາຍໂອກາດສຳລັບການເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ).
----------------
ອ່ານຂ່າວລະອຽດທີ່ນີ້: https://laoedaily.com.la/2025/06/23/142077/




You and 14 others · 2 comments · 2 shares
Like · Comment · Share

| 2025-06-23 | Pasaxon Facebook |
| --- | --- |

ປະຊາຊົນ
June 23 at 11:59 AM ·

ສະຄລິບວິດີໂອ ສົ່ງເສີມການສຶກສາ ຈະເຜີຍແຜ່ກ່ອນເປີດສົກຮຽນໃໝ່ ເດືອນ ກັນຍານີ້
............................
ສະຖາບັນວິທະຍາສາດການສຶກສາແຫ່ງຊາດ (ສວສ) ກະຊວງສຶກສາທິການ ແລະ ກິລາ(ສສກ) ຊຶ່ງໄດ້ຮັບການສະໜັບສະໜູນຈາກລັດຖະບານປະເທດອົສຕຣາລີ ໂດຍຜ່ານແຜນງານບີຄວາ ໄດ້ຈັດກອງປະຊຸມຂຽນສະຄລິບວິດີໂອ ສົ່ງເສີມການສຶກສາ ຂຶ້ນໃນວັນທີ 23 ມິຖຸນານີ້ ທີ່ ສວສ ໂດຍການເປັນປະທານຮ່ວມຂອງທ່ານ ອຸທິດ ທີບມະນີ ຮອງຜູ້ອຳນວຍການ ສວສ ແລະ ທ່ານນາງ ເຮກາທີ (Hegarty) ເລຂາເອກສະຖານທູດອົສຕຣາລີ ປະຈຳ ສປປ ລາວ, ມີຄະນະອຳນວຍການສູນພັດທະນາສື່ການຮຽນການສອນ ແລະ ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ, ມີທີມງານຈາກບັນດາກົມທີ່ກ່ຽວຂ້ອງ, ທີມງານແຜນງານບີຄວາ ແລະ ຕາງໜ້າອົງການອຸຍນີເຊັບ ປະຈຳລາວ ລາວ ເຂົ້າຮ່ວມ.
ທ່ານ ອຸທິດ ທີບມະນີ ກ່າວວ່າ: ກອງປະຊຸມໃນຄັ້ງນີ້, ຈັດຂຶ້ນໂດຍມີຈຸດປະສົງ ແລະ ເຫດຜົນຫຼັກຂອງການສ້າງສາລະຄະດີວິດີໂອ ສົ່ງເສີມການສຶກສາ ເພື່ອເປັນການຊຸກຍູ້ສົ່ງເສີມໃຫ້ສັງຄົມລາວ ເຫັນໄດ້ຄວາມສຳຄັນຂອງການສຶກສາ ເພາະວ່າການສຶກສາເປັນພື້ນຖານຂອງການດຳລົງຊີວິດດຽງກາງານ. ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າເນື່ອງຈາກສະພາບການຂອງໂລກ ກໍຄືສະພາບການບ້ານເມືອງຂອງລາວເຮົາ ໄດ້ຮັບຜົນສະທ້ອນຈາກສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ - ສັງຄົມ ສົ່ງຜົນໃຫ້ການເອົາໃຈໃສ່ໃນການສຶກສາຮ່ຳຮຽນຂອງນັກຮຽນ ກໍຄືການສົ່ງເສີມຂອງຜູ້ປົກຄອງຕໍ່ການສຶກສາ ໄດ້ມີທ່າອ່ຽງຫຼຸດໜ້ອຍຖອຍລົງເລື້ອຍໆ. ສະນັ້ນ, ວິດີໂອ ສົ່ງເສີມການສຶກສາ ທີ່ຄົ້ນຄວ້າສ້າງຂຶ້ນມານີ້ ຈະເປັນທ່າແຮງໜຶ່ງໃນການດຶງດູດຜູ້ຊົມ ກໍຄືສັງຄົມລາວເຫັນໄດ້ຄວາມສຳຄັນຂອງການສຶກສາຕໍ່ກັບການດຳລົງຊີວິດດຽງກາງານປະຈຳວັນ.
ທ່ານ ອຸທິດ ທີບມະນີ ຍັງໄດ້ຮຽກຮ້ອງໃຫ້ທີມງານທຸກທ່ານຈົ່ງໄດ້ເອົາໃຈໃສ່ຄົ້ນຄວ້າສະຄລິບໃຫ້ດີ, ຖີ່ຖ້ວນ ແລະ ອອກມາດີທີ່ສຸດຕາມທີ່ທາງທີມງານໄດ້ກະກຽມມາເຫັນວ່າມີວິດີໂອຫຼາຍຕອນປະມານ 4-5 ຕອນ ທຸກຕອນກໍໜ້າສົນໃຈ ແລະ ເປັນປະໂຫຍດໃນການສົ່ງເສີມການສຶກສາ ແຕ່ເນື່ອງຈາກວ່ານີ້ເປັນວິດີໂອແບບໃໝ່ຊຸດທຳອິດຕ່າງຈາກວິດີໂອທີ່ເຄີຍຜະລິດຜ່ານມາທັງມີເວລາຈຳກັດ ແລະ ຕາມການປຶກສາຂັ້ນວິຊາການຂອງທີມງານຜະລິດຕົວຈິງຂອງທັງສອງສູນຄື: ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ ແລະ ສູນພັດທະນາສື່ການຮຽນການສອນ ເຫັນວ່າຄວນຜະລິດຈຳນວນຕາມຄວາມສາມາດຕົວຈິງ ເພື່ອໃຫ້ທອງທັນກັບສະພາບຂອງການໃຊ້ງານ. ວິດີໂອນີ້ ຈະໃຫ້ມີການເຜີຍແຜ່ກ່ອນເປີດສົກຮຽນໃໝ່ໃນເດືອນກັນຍາ 2025 ທີ່ຈະມາເຖິງນີ້. ສະນັ້ນ, ໃຫ້ຄົ້ນຄວ້າເຮັດຈຳນວນໜ້ອຍກ່ອນ ແຕ່ໃຫ້ມີຄຸນນພາບດີເລີດອາດຈະເຮັດຊຸນລະວິດີໂອກ່ອນ ເພາະຄັນເຮັດຈຳນວນຫຼາຍຕາມການກະກຽມ ຢ້ານຈະບໍ່ທັນຕາມແຜນການ. ຫຼັງຈາກນັ້ນ, ຈຶ່ງຫາເວລາຄົ້ນຄວ້າສ້າງວິດີໂອຕໍ່ໄປອີກຈະເປັນການດີ ແລະ ຫວັງວ່າຈະມີວິດີໂອດີໆ ທີ່ເປັນປະໂຫຍດຕໍ່ການສຶກສາ ກໍຄືຕໍ່ສັງຄົມລາວເຜີຍແຜ່ອອກສູ່ສັງຄົມໂດຍໄວຕາມແຜນການ.
(ຂ່າວ-ພາບ: ວັນເພັງ)




You and 17 others · 3 shares
Like · Comment · Share

| 2025-06-24 | VTE 9 Facebook and TV |
| --- | --- |




ຍົກລະດັບທາງດ້ານວິຊາການ ຂຽນບົດເລື່ອງວິດີໂອ ເພື່ອການສຶກສາ

Like · Comment · Share · You, Corinne Javary and 3 others · 212 views

| 2025-06-24 | Lao National TV Youtube and TV |
|---|---|




ກອງປະຊຸມຂຽນບົດຂະບວນສົ່ງຂໍ້ຄວາມສົ່ງເສີມຄຸນຄ່າຂອງການສຶກສາ [24-06-2025]

ໂທລະພາບແຫ່ງຊາດລາວ ທຊລ 1
130K subscribers

Subscribe | 1 | Share | Download | ...

| 2025-06-25 | Vientiane Times Facebook |
|---|---|

Vientiane Times
2h ·

The governments of Laos and Australia have launched a campaign to rekindle a love of learning in Laos, aiming to tackle the alarming student dropout rates driven by economic pressures and a growing perception that education no longer guarantees employment.
The Ministry of Education and Sports is running a scriptwriting workshop from June 23-26, to develop a new communication campaign that promotes the value of education and supports student retention. (Read more below⬇️⬇️)




You and 16 others | 3 comments 1 share

Like | Comment | Share

| | |
|---|---|
| **2025-06-25** | **LATV (Army) Facebook and TV** |




| | |
|---|---|
| **2025-06-25** | **Edu-Sport TV Online Facebook, Youtube and TV** |



| 2025-06-27 | Lao Star TV Facebook and TV |
|---|---|




| 2025-06-27 | Vientian Radio FM 105.5 Facebook |
|---|---|



| 2025-06-27 | Lao National Radio FM 103.7 Facebook |
|---|---|

Lao National Radio
June 27 at 5:52 PM ·

ກະຊວງສຶກສາທິການແລະ ກິລາຮ່ວມກັບລັດຖະບານອົດສະຕຣາລີໄດ້ລິເລີ່ມຂະບວນການຈູງໃຈ ໃນຫົວຂໍ້ : ການສືບຕໍ່ຮຽນ, ສ້າງອະນາຄົດ.

ກະຊວງສຶກສາທິການ ແລະ ກິລາ (ສກ) ໄດ້ເປີດກອງປະຊຸມຂຽນບົດເລື່ອງວິດີໂອ ໃນວັນທີ 23-26 ເດືອນ ມິຖຸນາ 2025 ເພື່ອສ້າງຂະບວນສິ່ງຂໍ້ຄວາມທີ່ຈະສົ່ງເສີມຄຸນຄ່າຂອງການສຶກສາ ແລະ ສະໜັບສະໜູນການສືບຕໍ່ຮຽນຂອງນັກຮຽນ. ໂດຍພາຍໃຕ້ການຊີ້ນຳຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ, ຂະບວນການດັ່ງກ່າວ ຂຶ້ນແຜນ ສ້າງວິດີໂອໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີຜ່ານແຜນງານການຄຸນນະພາບ ແລະ ຂະຫຍາຍໂອກາດສຳລັບ ການເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ ( ແຜນງານບີຄວາ ). ໂດຍການເປັນປະທານຂອງທ່ານ ອຸທິດ ທິບມະນີ, ຮອງຜູ້ອຳນວຍການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແລະທ່ານ ນາງ ອາເນັດຊາ ເຣັກກາທີ່, ເລຂາເອກ, ສະຖານທູດ ອົດສະຕຣາລີ ປະຈຳ ສປປ ລາວ.

ເປັນບາດກ້າວທຳອິດ ໃນການແກ້ໄຂອັດຕາການອອກໂຮງຮຽນຂອງນັກຮຽນທີ່ກ່ຽວຂ້ອງກັບຄວາມຫຍຸ້ງຍາກດ້ານເສດ ຖະກິດ ແລະ ຄວາມເຊື່ອທີ່ເພີ່ມຂຶ້ນວ່າການສຶກສາບໍ່ໄດ້ນຳໄປສູ່ວຽກເຮັດງານທຳທີ່ດີ.

ທ່ານ ອຸທິດ ທິບມະນີ ໄດ້ກ່າວວ່າ: " ການສຶກສາບໍ່ພຽງແຕ່ເປັນຜົນສຳເລັດຂອງບຸກຄົນ, ແຕ່ຍັງເປັນການລົງທຶນຂອງ ປະເທດ. ພວກເຮົາຕ້ອງບອກເຖິງຊຸມຊົນຂອງພວກເຮົາວ່າການຮຽນຊ່ວຍເປີດປະຕູ, ສ້າງຄວາມສາມາດກຸ້ມຕົນເອງ ແລະ ຊ່ວຍ ໃຫ້ໄວໜຸ່ມເຕີບໂຕເປັນຜູ້ໃຫຍ່ທີ່ດີ. ໂດຍການສະໜັບສະໜູນຢ່າງໜັກແໜ້ນຈາກລັດຖະບານອົດສະຕຣາລີ, ພວກເຮົາຈະສ້າງວິດີ ໂອທີ່ສົ່ງຂໍ້ຄວາມສຳຄັນໂດຍກົງ ສົ່ງເຖິງຜູ້ປົກຄອງ ແລະ ນັກຮຽນ, ພວກເຮົາຈະປັບຄວາມຄິດຂອງຄອບຄົວໃນການຄິດ ກ່ຽວກັບ ອະນາຄົດຂອງລູກຄືແບບໃດ. ທັງນີ້ກໍ່ເພື່ອຊ່ວຍໃຫ້ການສຶກສາຖືເປັນບູລິມະສິດອີກຄັ້ງ".

ທ່ານນາງ ອາເນັດຊາ ເຣັກກາທີ່ ໄດ້ຊົມເຊີຍຕໍ່ການຮ່ວມມື ທັງສອງຝ່າຍ ແລະ ໄດ້ໃຫ້ຮູ້ວ່າ : " ກອງປະຊຸມຄັ້ງນີ້ ເປັນສ່ວນໜຶ່ງຂອງຄວາມພະຍາຍາມຮ່ວມກັນ ເພື່ອແກ້ໄຂບັນຫາອັນຮີບດ່ວນທີ່ສຸດໃນຂະແໜງການສຶກສາປັດຈຸບັນກໍ່ຄື: ການປະລະ ການຮຽນຂອງນັກຮຽນ, ເດັກນ້ອຍໃນລາວຫຼາຍຄົນໄດ້ອອກໂຮງຮຽນໄວເກີນໄປ ແລະ ເມື່ອເຂົາເຈົ້າອອກໂຮງຮຽນ ໄດ້ຈຳກັດອະ ນາຄົດຂອງເຂົາເຈົ້າ, ດ້ານໂອກາດຂອງຕົນເອງ ແລະ ການພັດທະນາປະເທດຊາດ. ຜ່ານວິດີໂອສັ້ນທີ່ມີຄຸນຄ່າ, ພວກເຮົາຫວັງ ວ່າຈະໄດ້ສົ່ງຂໍ້ຄວາມໂດຍກົງເຖິງຜູ້ປົກຄອງ, ນັກຮຽນ, ຜູ້ເຮັດວຽກໃນຂະແໜງການສຶກສາ, ຄູ ແລະ ຊຸມຊົນ. ຈຸກຍູ້ສົ່ງເສີມແຜນໂຄສະນາດັ່ງກ່າວຈະປະກອບມີວິດີໂອສັ້ນຫຼາຍອັນ ເວົ້າເຖິງບັນຫາການອອກໂຮງຮຽນຂອງນັກຮຽນທີ່ເພີ່ມຂຶ້ນໃນ ສປປລາວ ໂດຍມີຈຸດປະສົງເພື່ອປ່ຽນຄວາມເຂົ້າໃຈລະຫວ່າງນັກຮຽນ, ພໍ່ແມ່ ແລະ ຊຸມຊົນໂດຍສະແດງໃຫ້ເຫັນວ່າການສຶກສາ ນັ້ນ, ເຖິງແມ່ນວ່າຍັງບໍ່ທັນເປັນເສັ້ນທາງໄປສູ່ການເຮັດວຽກໄດ້ໃນຕອນນີ້ເທື່ອ, ແຕ່ໄດ້ໃຫ້ທັກສະຄວາມ ສາມາດ ແລະ ໂອກາດ ທີ່ໄວໜຸ່ມຕ້ອງການເພື່ອສ້າງອະນາຄົດຂອງຕົນເອງ.




You, Tik Chandaraphone and 10 others 5 shares

Like Comment Share

| 2025-07-01 | Lao National Television-English Program Facebook and TV |
|---|---|




**Stay in School, Shape the Future**

Like Comment Share You, Tik Chandaraphone and 13 others · 592 views

ການສຶກສາ

# ລິເລີ່ມຂະບວນການຊຸກຍູ້ຄວາມຮັກໃນການສຶກສາອີກຄັ້ງ ໃນຂອບເຂດທົ່ວປະເທດ.

By lar sone - June 23, 2025 9 0




ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ເປີດກອງປະຊຸມຂຽນບົດເລື່ອງວິດີໂອ ໃນວັນທີ 23-26 ເດືອນ ມິຖຸນາ 2025 ເພື່ອສ້າງຂະບວນສົ່ງຂໍ້ຄວາມ ທີ່ຈະສົ່ງເສີມຄຸນຄ່າຂອງການສຶກສາ ແລະ ສະໜັບສະໜູນການສືບຕໍ່ຮຽນຂອງນັກຮຽນ. ໂດຍພາຍໃຕ້ການຊີ້ນຳຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ, ຂະບວນການດັ່ງກ່າວ ຂຶ້ນແຜນສ້າງວິດີໂອ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານການຄຸນນະພາບ ແລະ ຂະຫຍາຍໂອກາດສຳລັບການເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ).

ກອງປະຊຸມດັ່ງກ່າວໄດ້ເປີດຂຶ້ນຢ່າງເປັນທາງການໂດຍການເປັນປະທານຂອງ [ທ່ານ ອຸທິດ ທິບມະນີ, ຮອງຜູ້ອຳນວຍການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ] ແລະ ທ່ານ ນາງ ວາເນັດຊ້າ ເຣັກກາທີ້, ເລຂາເອກ, ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ. ກອງປະຊຸມເປັນບາດກ້າວທຳອິດໃນການແກ້ໄຂອັດຕາການອອກໂຮງຮຽນຂອງນັກຮຽນ ທີ່ກ່ຽວຂ້ອງກັບຄວາມຫຍຸ້ງຍາກດ້ານເສດຖະກິດ ແລະ ຄວາມເຊື່ອທີ່ເພີ່ມຂຶ້ນວ່າການສຶກສາບໍ່ໄດ້ນຳໄປສູ່ວຽກເຮັດງານທຳທີ່ດີ.

ທ່ານ ອຸທິດ ທິບມະນີ ໄດ້ກ່າວວ່າ: "ການສຶກສາບໍ່ພຽງແຕ່ເປັນຜົນສຳເລັດຂອງບຸກຄົນ, ແຕ່ຍັງເປັນການລົງທຶນຂອງປະເທດ. ພວກເຮົາຕ້ອງບອກເຖິງຊຸມຊົນຂອງພວກເຮົາວ່າ ການຮຽນຊ່ວຍເປີດປະຕູ, ສ້າງຄວາມສາມາດກຸ້ມຕົນເອງ ແລະ ຊ່ວຍໃຫ້ໄວໜຸ່ມເຕີບໂຕເປັນຜູ້ໃຫຍ່ທີ່ດີ. ໂດຍການສະໜັບສະໜູນຢ່າງໜັກແໜ້ນ ຈາກລັດຖະບານອົດສະຕຣາລີ, ພວກເຮົາຈະສ້າງວິດີໂອທີ່ສົ່ງຂໍ້ຄວາມສຳຄັນໂດຍກົງກັບ ເຖິງຜູ້ປົກຄອງ ແລະ ນັກຮຽນ. ພວກເຮົາຈະປັບຄວາມຄິດຂອງຄອບຄົວໃນການຄິດກ່ຽວກັບອະນາຄົດຂອງລູກຄືແບບໃດ. ທັງນີ້ກໍ່ເພື່ອຊ່ວຍໃຫ້ການສຶກສາຖືເປັນບູລິມະສິດອີກຄັ້ງ".

ທ່ານ ນາງ ວາເນັດຊ້າ ເຣັກກາທີ້ ໄດ້ຊົມເຊີຍຕໍ່ການຮ່ວມມືດັ່ງກ່າວວ່າ: "ກອງປະຊຸມຄັ້ງນີ້ ເປັນສ່ວນໜຶ່ງຂອງຄວາມພະຍາຍາມຮ່ວມກັນ ເພື່ອແກ້ໄຂບັນຫາອັນຮີບດ່ວນທີ່ສຸດໃນຂະແໜງການສຶກສາປະຈຸບັນ ກໍ່ຄື: ການປະລະການຮຽນຂອງນັກຮຽນ, ເດັກນ້ອຍໃນລາວຫຼາຍຄົນ ໄດ້ອອກໂຮງຮຽນໄວເກີນໄປ ແລະ ເມື່ອເຂົາເຈົ້າອອກໂຮງຮຽນ, ໄດ້ຈຳກັດອະນາຄົດຂອງເຂົາເຈົ້າ, ດ້ານໂອກາດຂອງຕົນເອງ ແລະ ການພັດທະນາປະເທດຊາດ. ຜ່ານວິດີໂອສັ້ນ, ທີ່ມີຄຸນຄ່າ, ພວກເຮົາຫວັງວ່າຈະໄດ້ສົ່ງຂໍ້ຄວາມໂດຍກົງເຖິງຜູ້ປົກຄອງ, ນັກຮຽນ, ຜູ້ເຮັດວຽກໃນຂະແໜງການສຶກສາ, ຄູ ແລະ ຊຸມຊົນ. ຊຸກຍູ້ສົ່ງເສີມໃຫ້ເຂົາເຈົ້າເຫັນວ່າການສຶກສາເປັນການລົງທຶນທີ່ມີຄ່າໃນອະນາຄົດ".

ກອງປະຊຸມຂຽນບົດເລື່ອງຄັ້ງນີ້ ມີຜູ້ຕາງໜ້າຈາກ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ, ຂະແໜງສື່ເອເລັກໂຕຣນິກ ແລະ ການສຶກສາທາງໄກ ເຊິ່ງເປັນທີມງານມີປະສົບການໃນການສ້າງຜະລິດວິດີໂອ ຂອງກະຊວງສຶກສາທິການ ແລະ ກິລາ. ນອກຈາກນີ້, ຍັງມີຜູ້ເຂົ້າຮ່ວມຕາງໜ້າຈາກກົມສ້າງຄູ ແລະ ກົມສາມັນສຶກສາ. ກອງປະຊຸມແມ່ນນຳພາໂດຍຜູ້ຊ່ຽວຊານວຽກງານສື່ສານຂອງແຜນງານບີຄວາ ທີ່ໄດ້ໃຫ້ຄຳແນະນຳດ້ານວິຊາການກ່ຽວກັບການຂຽນບົດເລື່ອງ ແລະ ວິທີການເລົ່າເລື່ອງລາວ.

ແຜນໂຄສະນາດັ່ງກ່າວຈະປະກອບມີວິດີໂອສັ້ນຫຼາຍອັນ ທີ່ເວົ້າເຖິງບັນຫາການອອກໂຮງຮຽນຂອງນັກຮຽນທີ່ເພີ່ມຂຶ້ນໃນ ສປປ ລາວ. ວິດີໂອມີຈຸດປະສົງເພື່ອປັບປຸງຄວາມເຂົ້າໃຈລະຫວ່າງນັກຮຽນ, ພໍ່ແມ່ ແລະ ຊຸມຊົນ ໂດຍສະແດງໃຫ້ເຫັນວ່າ ການສຶກສານັ້ນ, ເຖິງແມ່ນວ່າຍັງບໍ່ທັນເປັນເສັ້ນທາງໄປສູ່ການເຮັດວຽກໄດ້ໃນຕອນນີ້ເທື່ອ, ແຕ່ໄດ້ໃຫ້ທັກສະຄວາມສາມາດ ແລະ ໂອກາດທີ່ໄວ ໜຸ່ມຕ້ອງການເພື່ອສ້າງອະນາຄົດຂອງຕົນເອງ.

ທ່ານ ອຸທິດ ທິບມະນີ ໄດ້ອະທິບາຍວ່າ: "ໂດຍສະແດງໃຫ້ເຫັນວ່າການສຶກສາເສີມສ້າງທັກສະທີ່ຈຳເປັນ ແລະ ເພີ່ມໂອກາດ, ແຜນໂຄສະນາຈະຊ່ວຍເປັນແຮງບັນດານໃຈໃຫ້ແກ່ນັກຮຽນສືບຕໍ່ການຮຽນ ແລະ ຊຸກຍູ້ໃຫ້ຜູ້ປົກຄອງ ສະໜັບສະໜູນການສຶກສາຂອງລູກຫຼານຂອງເຂົາເຈົ້າ, ປູທາງໄປສູ່ອະນາຄົດທີ່ເຂັ້ມແຂງຂອງປະເທດລາວ. ການສຶກສາແມ່ນເປັນຄວາມຮັບຜິດຊອບຮ່ວມກັນທຸກຄົນ. ແຜນໂຄສະນານີ້ແມ່ນເປັນອີກທາງເລືອກໜຶ່ງທີ່ພວກເຮົາຈະສາມາດເຂົ້າເຖິງຂັ້ນຄອບຄົວ ແລະ ຫົວໃຈຂອງຜູ້ປົກຄອງ ທີ່ຈະໄດ້ຮັບການຢໍ້າຄືນວ່າ ການສືບຕໍ່ການຮຽນຂອງນັກຮຽນມີຄວາມສຳຄັນຄືແນວໃດ. ເພາະການສຶກສາແມ່ນເປັນເສັ້ນທາງສູ່ຄວາມສາມາດກຸ້ມຕົນເອງ ແລະ ເຂົ້າເຖິງໂອກາດ. ໃນໂລກທີ່ມີການປ່ຽນແປງຢ່າງໄວ, ການໄດ້ຮັບການສຶກສາແມ່ນເປັນການກະກຽມຄວາມພ້ອມສຳລັບອະນາຄົດ".

ໃນໄລຍະການປະຊຸມຂຽນບົດເລື່ອງເປັນເວລາ 4 ວັນ, ທີມງານຜະລິດວິດີໂອຂອງກະຊວງຈະປັບປຸງບົດເລື່ອງຂອງວິດີໂອ ແລະ ແຕ້ມຮູບແຜ່ນພາບເລົ່າເລື່ອງລາວ. ວິດີໂອທີ່ຕົກລົງເປັນເອກະພາບກັນຈະສະທ້ອນເຖິງຄວາມເປັນຈິງຂອງຄອບຄົວໃນລາວ, ໂດຍໃຊ້ຕົວຢ່າງທີ່ສະແດງອອກໃຫ້ເຫັນເຖິງວັດທະນະທຳ. ການຜະລິດວິດີໂອຈະຖືກນຳພາໂດຍທີມງານ ສວສ ການຮ່ວມກັບ ກົມສ້າງຄູ ແລະ ກົມສາມັນສຶກສາ, ໂດຍມີເປົ້າຫມາຍທີ່ຈະອອກອາກາດກ່ອນການເລີ່ມໄຂສົກຮຽນໃໝ່ 2025-2026 ໃນເດືອນກັນຍານີ້.

ແຜນໂຄສະນາດັ່ງກ່າວຈະໄດ້ອອກອາກາດທາງໂທລະພາບແຫ່ງຊາດ, ທາງສື່ສັງຄົມ ແລະ ຍັງສາມາດນຳໃຊ້ໃນໂຄສະນາປະຊາສຳພັນໃນຊຸມຊົນໂດຍສະມາຊິກສະພາແຫ່ງຊາດ. ວິດີໂອຍັງຈະຖືກເຜີຍແຜ່ໃຫ້ຄູ, ຜູ້ເຮັດວຽກສຶກສານິເທດ ແລະ ຜູ້ເຮັດວຽກໃນຂະແໜງການສຶກສາ ເພື່ອສະໜັບສະໜູນການໂຄສະນາສົ່ງເສີມການໃນທ້ອງຖິ່ນຂອງໂຮງຮຽນ ແລະ ໝູ່ບ້ານ.

"ນີ້ບໍ່ແມ່ນພຽງແຕ່ການແຜນໂຄສະນາຜ່ານສື່, ແຕ່ເປັນຂໍ້ຄວາມສຳຄັນລະດັບຊາດຂອງຄວາມຫວັງ ແລະ ຄວາມມຸ້ງໝັ້ນໃນການສຶກສາ, ໂດຍການລົງທຶນໃນການສຶກສາ, ພວກເຮົາລົງທຶນໃນອານາຄົດຂອງເດັກນ້ອຍທຸກຄົນ, ອານາຄົດຂອງທຸກຄອບຄົວ ແລະ ອານາຄົດຂອງປະເທດ" ກ່າວໂດຍ ທ່ານ ອຸທິດ ທິບມະນີ. ທ່ານ ນາງ ວາເນັດຊ້າ ເຣັກກາທີ້ ໄດ້ກ່າວປິດທ້າຍກອງປະຊຸມດ້ວຍການຮຽກຮ້ອງວ່າ: "ອະນາຄົດຂອງການສຶກສາລາວຄວນໄດ້ຮັບການບອກເລົ່າເລື່ອງລາວທີ່ມີພະລັງ ແລະ ເຮົາມາເລີ່ມຕົ້ນນຳກັນໃນມື້ນີ້".




ຂ່າວຫຼ້າສຸດ

- ສິງກະໂປ ສົ່ງອອກສິນຄ້າທີ່ບໍ່ແມ່ນນໍ້າມັນ ຫຼຸດລົງ 3.5%
- ປະກາດການຈັດຕັ້ງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
- ຣັດເຊຍ ຍັງເປັນປະເທດສົ່ງອອກເຂົ້າສາລີອັນດັບໜຶ່ງຂອງໂລກ
- ການສົ່ງອອກຍີ່ປຸ່ນ ຫຼຸດລົງ 1.7% ຕໍ່າສຸດໃນຮອບ 8 ເດືອນ
- ເຟດ ຍັງຮັກສາອັດຕາດອກເບ້ຍທີ່ລະດັບ 4.25 – 4.5%

| 2025-06-24 | BEQUAL (English and Lao) Website |
|---|---|

BEQUAL    About us    Activities    Library    Opportunities    English

# Stay in School, Shape the Future: Ministry of Education and Sports and Australia launch national campaign to reignite a love of learning

POSTED ON 24 JUNE 2025


Script writing team for the campaign to promote education

**Scriptwriting has begun on a vital initiative to deliver a powerful message to students and families: education builds futures**

The Ministry of Education and Sports (MoES) launched a scriptwriting workshop this week to develop a new communication campaign to promote the value of education and support student retention. Initiated at the request of the Minister of Education and Sports of Lao PDR, the campaign is being developed with support from the Australian Government through the Basic Education Quality and Access in Lao PDR (BEQUAL) program.

The workshop was officially opened by Mr. Outhid Thipmany, Deputy Director of the Research Institute for Educational Sciences, and Ms. Vanessa Hegarty, First Secretary, Australian Embassy. It marks a first step in addressing the concerning rate of student dropout linked to economic pressures and a growing belief that education does not lead to employment.

Mr. Outhid Thipmany said ***"Education is not just a personal achievement. It is a national investment. We must remind our communities that learning opens doors, builds resilience, and helps young people thrive. With strong support from the Australian Government, we are creating videos that speak directly to parents and students. We will reshape how families see the future. This is how we make education a priority again."***

Ms. Vanessa Hegarty praised the collaborative effort: ***"This workshop is part of a shared effort to respond to one of the most urgent issues in education today: student dropout. Too many children in Laos are leaving school too early, and when they do, it limits their future, their opportunities, and the development of the country. Through these short, powerful videos, we hope to speak directly to parents, students, teachers, and communities, encouraging them to see education as a valuable investment in the future."***


Mr Outhit Thipmany and Ms Vanessa Hegarty opened the script writing workshop


The script writers discuss different realistic life stories

The workshop was attended by representatives from the Research Institute of Educational Sciences (RIES) Information Media Centre and E-learning teams, who are leading the video production at the Ministry of Education and Sports. Participants also included representatives from the Department of Teacher Education (DTE) and the Department of General Education (DGE). The sessions were facilitated by communication experts from the BEQUAL program, who provided technical guidance on script development and storytelling approaches.

The campaign will include several short videos that address the growing issue of student dropout in Lao PDR. The videos aim to shift perceptions among students, parents, and communities by showing that education, while not always an immediate path to employment, builds the skills and opportunities young people need to shape their own futures.

Mr. Outhid Thipmany explains ***"By showing that education strengthens essential skills and expands opportunities, the campaign seeks to inspire students to stay in school and encourage parents to support their children's education, paving the way for a stronger future for Laos. Education is a shared responsibility. This campaign is one way we can reach into homes and hearts, reminding parents and students that staying in school matters, because education is the pathway to resilience and opportunity. In a rapidly changing world, getting an education is the preparation for a successful future."***


Mapping different paths of life of students who dropped school and students who continue


The objective of the campaign is to motivate students and parents to see education as an investment

Over the next four days, the Ministry's video production teams will refine the video scripts and develop storyboards. The final videos will reflect the realities of Lao families, using culturally relevant examples. The production will be led by RIES in collaboration with DTE and DGE, with the goal of releasing the videos before the start of the 2025–26 school year in September.

The campaign will be broadcast on national television, shared on social media, and used in community outreach by National Assembly members. Videos will also be made available to teachers, pedagogical advisors, and education officials to support local advocacy in schools and villages.

***"This is not just a media campaign, it is a national message of hope and ambition," concluded Mr. Outhid Thipmany. "By investing in education, we invest in the future of every child, every family, and the entire country."***

Ms. Vanessa Hegarty closed with a call to action: ***"The future of education in Laos deserves powerful stories, and it starts right here."***


The campaign will celebrate the long-term impact of teaching

Vientiane Times
LAO PRESS IN FOREIGN LANGUAGES
www.vientianetimes.org.la www.vientianetimes.la

Home About Us Lao-Web Lao-FB Eng-FB VideoClips Previous EPaper Websites Partners Advertise Subscribe Payments Log In

## Laos, Australia launch "love learning" campaign to stem student dropouts

The governments of Laos and Australia have launched a campaign to rekindle a love of learning in Laos, aiming to tackle the alarming student dropout rates driven by economic pressures and a growing perception that education no longer guarantees employment.
The Ministry of Education and Sports is running a scriptwriting workshop from June 23-26, to develop a new communication campaign that promotes the value of education and supports student retention.




**Mr Outhid Thipmany and Ms Vanessa Hegarty attend the "love learning" workshop.**

Initiated at the request of the Ministry of Education and Sports, the campaign is being developed with support from the Australian government through the Basic Education Quality and Access in Laos (BEQUAL) programme.
First Secretary at the Australian Embassy to Laos, Ms Vanessa Hegarty, praised the collaborative effort, saying "This workshop is part of a shared effort to respond to one of the most urgent issues in education today: student dropouts."
"Through these short, powerful videos, we hope to speak directly to parents, students, teachers and communities, encouraging them to see education as a valuable investment in the future." The campaign will include several short videos that address the growing issue of student dropouts in Laos.
The videos aim to shift perceptions among students, parents and communities by showing that education, while not always an immediate path to employment, builds the skills and opportunities young people need to shape their own futures.
Deputy Director of the Research Institute for Educational Sciences, Mr Outhid Thipmany, said the campaign seeks to inspire students to stay in school and encourage parents to support their children's education, paving the way for a stronger future for Laos.
"This campaign is one way we can reach into homes and hearts, reminding parents and students that staying in school matters, because education is the pathway to resilience and opportunity. In a rapidly changing world, getting an education is the preparation for a successful future," he said.
Over the four-day workshop, the ministry's video production teams will refine the video scripts and develop storyboards. The final videos will reflect the realities of Lao families, using culturally relevant examples.
The videos will be released before the start of the 2025-2026 school year in September.
The campaign will be broadcast on national television, shared on social media, and used in community outreach by National Assembly members.
Videos will also be made available to teachers, pedagogical advisors, and education officials to support local advocacy in schools and villages.

**By Times Repoters**
**(Latest Update June 25, 2025)**